**LAO PEOPLE'S DEMOCRATIC REPUBLIC**

**PEACE, INDEPENDENCE, DEMOCRATIC, UNITY, PROSPERITY**


**EMBASSY OF THE**
**LAO PEOPLE'S DEMOCRATIC REPUBLIC**

**520, 502/1-3 Soi Sahakarnpramoon**
**Pracha-Uthit Road, Wangthonglang,**
**Bangkok 10310 THAILAND**
**Tel : 02 539 6667-8 Fax : 02 539 3827**


ພະແນກເສດຖະກິດ-ການຄ້າ

ເລກທີ 028 /ສລບ.ກຄ

ບາງກອກ, ວັນທີ່ 22 ເມສາ 2013

ຮຽນ : ທ່ານ ຫົວໜ້າຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ

<u>ທີ່ ນະຄອນຫຼວງວຽງຈັນ</u>

ເລື່ອງ : ລາຍງານ ກ່ຽວກັບ ການຂໍສຶກສາຂໍ້ມູນການສົ່ງອອກ ຢາງພາລາຈາກ ສປປ ລາວ ໂດຍຜ່ານແດນປະເທດໄທໄປປະເທດອິນເດຍ.

- ອີງຕາມສະໂນດນຳສົ່ງຂອງຫ້ອງການ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0971/ຫອຄ.ກຂອ, ລົງວັນທີ 29 ມີນາ 2013.

ພະແນກເສດຖະກິດ-ການຄ້າ, ສະຖານເອກອັກຄະລັດຖະທູດ ແຫ່ງ ສ ປປ ລາວ ປະຈຳ ປະເທດໄທ ທີ່ ບາງກອກ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ຊາບວ່າ ຜ່ານການປະສານພົວພັນກັບພາກສ່ວນທີ່ກ່ຽວຂ້ອງຂອງປະເທດໄທ ຄື: ສຳນັກງານສຸລະກາກອນທ່າເຮືອກຸງເທບ(ຄອງເຕີຍ) ແລະ ກົມການຄ້າຕ່າງປະເທດ, ກະຊວງພານິດຂອງໄທ ກ່ຽວກັບ ການສົ່ງອອກສິນຄ້າຢາງພາລາຈາກ ສປປ ລາວ ຜ່ານແດນໄທໄປປະເທດທີສາມ(ປະເທດອິນເດຍ) ແມ່ນ ສົ່ງອອກຜ່ານໄດ້ເລີຍຕາມລະບຽບການສົ່ງສິນຄ້າຜ່ານແດນລະຫວ່າງສອງປະເທດລາວ ແລະ ໄທ. ແຕ່ຖ້າຫາກວ່າມີການຊື້-ຂາຍເຂົ້າໄປໄທ ແລ້ວສົ່ງອອກຕໍ່ໄປປະເທດທີສາມ ແມ່ນຈະຕ້ອງຂໍອະຍາດນຳເຂົ້າຕາມລະບຽບການ ເນື່ອງຈາກວ່າ ສິນຄ້າຢາງພາລາເປັນສິນຄ້າຄວບຄຸມຂອງໄທ.

LAO EMBASSY IN BANGKOK

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານ ເພື່ອຊາບ ຕາມທາງຄວນດ້ວຍ

ພະແນກເສດຖະກິດ-ການຄ້າ

ຂັນລາສີ ແກ້ວບຸນພັນ

ທີ່ປຶກສາ